ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******** ✧ ********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ
ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ

ເລກທີ: 305/ຄຊກລ

ນະຄອນຫຼວງວຽງຈັນ, ວັນທີ 20 NOV 2017

## ບົດລາຍງານ

## ຝຶກອົບຮົມ ການໂຄສະນາສຶກສາຄວາມສ່ຽງໄພຈາກ ລະເບີດບໍ່ທັນແຕກ (ລບຕ) ໃຫ້ອາສາສະໝັກບ້ານ ວັນທີ 6-10/11/2017 ຢູ່ທີ່ແຂວງຊຽງຂວາງ.

ຝຶກອົບຮົມ ການໂຄສະນາສຶກສາຄວາມສ່ຽງໄພຈາກ ລະເບີດບໍ່ທັນແຕກ(ລບຕ) ໃຫ້ກັບອາສາສະໝັກບ້ານ ໄດ້ຈັດຂຶ້ນໃນວັນທີ 6-10 ພະຈິກ 2017 ຢູ່ທີ່ແຂວງຊຽງຂວາງ, ໂດຍການເປັນປະທານຂອງ ທ່ານ ຈັນທີ ຄິວມາລາ ຫົວໜ້າຫ້ອງການປະສານງານ ຄຊກລ ແຂວງຊຽງຂວາງ ແລະ ທ່ານ ວັນສາຍ ຂັນທະວົງ ຮອງຫົວໜ້າຫ້ອງການ ຄກລ ແຂວງຊຽງຂວາງ ເຊິ່ງໃນການກ່າວເປີດເພິ່ນໄດ້ເນັ້ນໜັກເຖິງ: ອາສາສະໝັກບ້ານ ແມ່ນພາກສ່ວນທີ່ສຳຄັນ ໃນການປຶກສາຫາລື ສົນທະນາກັບປະຊາຊົນພາຍໃນບ້ານ ແລະ ເຂົາເຈົ້າກໍ່ຮູ້ສະພາບການຂອງບ້ານເປັນຢ່າງດີ ສະນັ້ນ ການຝຶກອົບຮົມໃນຄັ້ງນີ້ ແມ່ນເປັນການຝຶກໃຫ້ກັບ ອສບ ທີ່ມາໃໝ່, ເປັນການທົບທວນ ສຳລັບ ອສບ ເກົ່າ ແລະ ເປັນການຮຽນຮູ້ ເພື່ອນຳເອົາຄວາມຮູ້ຈາກການຝຶກອົບຮົມ ໄປໝູນໃຊ້ໃນການໂຄສະນາສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ (ລບຕ) ໃນບ້ານຂອງຕົນເອງ, ຂ້າພະເຈົ້າຫວັງວ່າ ພວກທ່ານຈະຊ່ວຍພວກເຮົາ ໃນການສືບຕໍ່ສົ່ງຂໍ້ມູນທີ່ປອດໄພ ເຮັດແນວໃດຈະສາມາດລຸດຜ່ອນຄວາມສ່ຽງຈາກລະເບີດບໍ່ທັນແຕກໃນຊຸມຊົນ.

- <u>ຈຸດປະສົງ:</u>
  - ເພື່ອສ້າງຄວາມເຂັ້ມແຂງໃຫ້ ອາສາສະໝັກບ້ານ (ອສບ) ເກົ່າ ທີ່ໄດ້ຮັບການຝຶກອົບຮົມ ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຕັ້ງແຕ່ ສິບປີຜ່ານມາ.
  - ເພື່ອສ້າງຄວາມເຂັ້ມແຂງໃຫ້ ອາສາສະໝັກບ້ານ (ອສບ) ໃໝ່ ທີ່ບໍ່ເຄີຍໄດ້ຮັບການຝຶກອົບຮົມ ການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ເພື່ອຮັບປະກັນຄຸນນະພາບຂອງ ກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ທີ່ຈະໄດ້ຈັດຂຶ້ນໃນບ້ານ.
  - ເພື່ອເປັນການທົດລອງ ຄູ່ມື ສຳລັບອາສາສະໝັກບ້ານ (ອສບ).

ບ້ານສີສັງວອນ, ເມືອງໄຊເສດຖາ, ໄປສະນີ: 7261, ໂທ: (856-21) 262386, ແຟັກ : 262396,
ອີເມວ: uxo.nra@gmail.com, www.nra.gov.la

- <u>ຜູ້ເຂົ້າຮ່ວມ:</u>
    - ຫ້ອງການ ຄຊກລ ນະຄອນຫຼວງວຽງຈັນ 3 ທ່ານ, ຫ້ອງການປະສານງານ ຄຊກລ ແຂວງຊຽງຂວາງ 4 ທ່ານ, ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) 1 ທ່ານ, ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ແຂວງຊຽງຂວາງ 2 ທ່ານ, ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ແຂວງຫຼວງພະບາງ 1 ທ່ານ, ອາສາສະໝັກບ້ານ (ອສບ) ທີ່ມາຈາກ ແຂວງຊຽງຂວາງ 20 ທ່ານ, ອາສາສະໝັກບ້ານ (ອສບ) ທີ່ມາຈາກແຂວງຫຼວງພະບາງ 20 ທ່ານ.

- <u>ເນື້ອໃນການຝຶກອົບຮົມ:</u>
    - ພາບລວມການໂຄສະນາສຶກສາຄວາມສ່ຽງອັນຕະລາຍຈາກ ລບຕ ຢູ່ ສປປ ລາວ.
    - ປະຫວັດສາດ ແລະ ຄວາມເປັນມາຂອງ ລບຕ.
    - ປະເພດ ຂອງ ລບຕ.
    - ສາເຫດພາໃຫ້ເກີດອຸປະຕິເຫດ ແລະ ວິທີປ້ອງກັນຕົນເອງຈາກຜົນກະທົບຂອງ ລບຕ.
    - ການລາຍງານໃນເວລາພົບເຫັນລະເບີດບໍ່ທັນແຕກ.
    - ການລາຍງານເຂົ້າຖານຂໍ້ມູນ ອົມສະມາ, ອຸປະຕິເຫດຈາກ ລບຕ ແລະ ເບີສາຍດ່ວນ ກ່ຽວກັບອຸປະຕິເຫດຈາກ ລບຕ.
    - ກຽມການທົດລອງ ແລະ ສະຫຼຸບຖອດຖອນບົດຮຽນ.

- **ວິທີການຝຶກອົບຮົມ:**
    - ນຳສະເໜີ.
    - ແບ່ງກຸ່ມສົນທະນາ, ຕົວແທນຂອງກຸ່ມນຳສະເໜີ ແລະ ສະຫຼຸບຖອດຖອນບົດຮຽນ.
    - ຮ້ອງເພງ ລະເບີດບໍ່ທັນແຕກ ແລະ ຫຼິ້ນເກມ.
    - ກຽມການທົດລອງ.

- **ທີ່ກອງປະຊຸມ ຝຶກອົບຮົມ ໄດ້ປຶກສາຫາລື:**
- ຂະບວນການຮຽນຮູ້ຂອງຄົນ, ທັກສະໃນການເວົ້າ ແລະ ກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ.

- ຄວາມໝາຍ ຂອງ ອາສາສະໝັກບ້ານ.

- ເປັນຫຍັງ ພວກເຮົາຈຶ່ງຈຳເປັນຕ້ອງມີ ອາສາສະໝັກບ້ານ ສຳລັບກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ.

- ພວກເຮົາໄດ້ຜົນປະໂຫຍດຫຍັງ ຈາກບັນດາອາສາສະໝັກບ້ານ ເວລາເຂົາເຈົ້າ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນຊຸມຊົນ (ຄົນທ້ອງຖິ່ນ, ຮີດຄອງປະເພນີ).

ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,ໄປສະນີ 726, ໂທ: (85621) 262386, ແຟັກ : 262396,
ເບີອີເມວ : uxo.nra@gmail.com, www.nra.gov.la

- ຈະກະກຽມແນວໃດ ສໍາລັບການຈັດກິດຈະກໍາ (ການປະສານງານ, ເອກະສານສະໜັບສະໜູນ, ການລາຍງານ, ເນື້ອໃນຂອງກິດຈະກໍາ ແລະ ທິດທາງ).
- ປະຫວັດສາດ ແລະ ຄວາມເປັນມາຂອງ ລບຕ.
- ປະເພດ ຂອງ ລບຕ.
- ສາເຫດພາໃຫ້ເກີດອຸປະຕິເຫດ ແລະ ວິທີປ້ອງກັນຕົນເອງຈາກຜົນກະທົບຂອງ ລບຕ.
- ການລາຍງານໃນເວລາພົບເຫັນລະເບີດບໍ່ທັນແຕກ.
- ຈະໜູນໃຊ້ຂໍ້ມູນຈາກການຝຶກອົບຮົມໃນຄັ້ງນີ້ ເຂົ້າໃນກິດຈະກໍາ ຢູ່ຊຸມຊົນແນວໃດ.
- ຈະໜູນໃຊ້ ຄູ່ມື ເພື່ອເປັນທິດທາງ ແລະ ຮັບປະກັນຄຸນນະພາບ ຂອງກິດຈະກໍາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແນວໃດ.

- <u>ຜົນໄດ້ຮັບ</u>:
  - ບັນດາຜູ້ເຂົ້າຮ່ວມ ຈາກແຂວງຫຼວງພະບາງ ແລະ ແຂວງຊຽງຂວາງ ໄດ້ຮຽນຮູ້ຫຼາຍຂຶ້ນກ່ຽວກັບຂໍ້ມູນຂອງລະເບີດບໍ່ທັນແຕກ ທີ່ສະໜັບສະໜູນ ກິດຈະກໍາການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ລວມທັງ ອສບ ເກົ່າ ແລະ ອສບ ໃໝ່.
  - ບັນດາຜູ້ເຂົ້າຮ່ວມ ມີຄວາມເຂົ້າໃຈຫຼາຍຂຶ້ນ ໃນການກະກຽມກ່ອນຈັດກິດຈະກໍາ ແລະ ຈະໜູນໃຊ້ຂໍ້ມູນຈາກການຝຶກອົບຮົມໃນຄັ້ງນີ້ ແນວໃດ ເພື່ອລຸດຜ່ອນຄວາມສ່ຽງຈາກລະເບີດບໍ່ທັນແຕກ ໃນຊຸມຊົນ.
  - ບັນດາຜູ້ເຂົ້າຮ່ວມມີຄວາມເຂົ້າໃຈຫຼາຍຂຶ້ນ ວ່າຈະຈັດກິດຈະກໍາໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນຊຸມຊົນແນວໃດ ແລະ ເຂົ້າໃຈຫຼາຍຂຶ້ນກ່ຽວກັບລະບົບການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ.
  - ຄູ່ມືຖືກອັດສໍາເນົາ ແຈກຢາຍໃຫ້ບັນດາອາສາສະໝັກບ້ານ (ອສບ) ເພື່ອນໍາໃຊ້ເຂົ້າໃນກິດຈະກໍາ ຂອງເຂົາເຈົ້າ ໃນເຂດພື້ນທີ່ເປົ້າໝາຍ.

ຫົວໜ້າຫ້ອງການ

ບຸນເພັງ ສີສະຫວັດ
Mr.Bounpheng SISAWATH

ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ

ສີສະນາຣົມ